**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*******

ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ                                                  ເລກທີ 644/ຖວ

ນະຄອນຫຼວງວຽງຈັນ, ວັນທີ 16 / 09 / 2003

# ຂໍ້ກຳນົດ

## ຂອງລັດຖະມົນຕີວ່າການກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ວ່າດ້ວຍການຄຸ້ມຄອງປ້າຍ, ປ້າຍໂຄສະນາສິນຄ້າ ແລະ ບໍລິການ ຢູ່ ສ.ປ.ປ.ລາວ

- *ອີງໃສ່ ລັດຖະທຳມະນູນ ແລະ ກົດໝາຍ ຂອງ ລັດຖະບານ ສ.ປ.ປ.ລາວ*
- *ອີງໃສ່ ດຳລັດ ຂອງ ນາຍົກລັດຖະມົນຕີ ເລກທີ 25 / ນຍ, ລົງວັນທີ 24 / 03 /1999 ວ່າດ້ວຍທີ່ຕັ້ງ, ພາລະບົດບາດ ແລະ ການເຄື່ອນໄຫວວຽກງານ ຂອງ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ*

**ລັດຖະມົນຕີວ່າການ**

**ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ**

**ອອກຂໍ້ກຳນົດ:**

## ໝວດທີ I

## ວ່າດ້ວຍຫລັກການທົ່ວໄປ.

### ມາດຕາ 1: ຈຸດປະສົງ

1.1 ເພື່ອໃຫ້ບັນດາຂະແໜງການວັດທະນະທຳປະຈຳແຂວງ, ນະຄອນຫລວງວຽງຈັນ ແລະ ເຂດ ພິເສດ ໃນທົ່ວປະເທດ ມີບ່ອນອີງໃນການຈັດຕັ້ງປະຕິບັດ ໃຫ້ມີຄວາມເປັນເອກະພາບ;

1.2 ເພື່ອໃຫ້ທຸກພາກສ່ວນ ດຳເນີນການໂຄສະນາໃຫ້ສອດຄ່ອງກັບ ກົນໄກເສດຖະກິດ ຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ;

1.3 ເພື່ອຮັກສາໄວ້ເອກະລັກວັດທະນະທຳ ແລະ ພາສາລາວ ໃນການໂຄສະນາ, ປະດັບປະດາ, ຕົບແຕ່ງປ້າຍຕ່າງໆ;

1.4 ເພື່ອປະຕິບັດຕາມຫລັກການ: ສູນການຄຸ້ມຄອງມະຫາພາກຕໍ່ທ້ອງຖິ່ນ, ໃຫ້ທ້ອງຖິ່ນຄຸ້ມຄອງຈຸລະພາກ, ຂັ້ນໃດອະນຸມັດ, ຂັ້ນນັ້ນຄຸ້ມຄອງ, ຂັ້ນເທິງກວດກາຂັ້ນລຸ່ມ.

## ມາດຕາ 2: ບັນດາປະເພດປ້າຍ

1.1 ປ້າຍບົ່ງບອກປະກອບດ້ວຍປ້າຍກະຊວງ, ສຳນັກງານ, ອົງການຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;

1.2 ປ້າຍໂຄສະນາສິນຄ້າ ແລະ ບໍລິການປະກອບດ້ວຍປ້າຍບໍລິສັດ, ປ້າຍປະກາດ, ປ້າຍແຈ້ງການ, ປ້າຍແນະນຳສິນຄ້າ ( ໂລໂກ ) ແລະ ປ້າຍບໍລິການຕ່າງໆ.

# ໝວດທີ II

## ວ່າດ້ວຍສິດໜ້າທີ່ ອະນຸຍາດ ແລະ ຄຸ້ມຄອງ

## ມາດຕາ 3: ການຄຸ້ມຄອງແບ່ງປັນ 03 ຂັ້ນ:

1.1 ຂັ້ນກະຊວງ: ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ມີໜ້າທີ່ຄຸ້ມຄອງມະຫາພາກ, ອອກຂໍ້ກຳນົດລວມທົ່ວປະເທດ ເພື່ອເປັນບ່ອນອີງໃຫ້ທ້ອງຖິ່ນ ແລະ ຂະແໜງການຕ່າງໆ, ວາງລະບຽບການລະອຽດ ເພື່ອຈັດຕັ້ງປະຕິບັດ.

- ກົມກ່ຽວຂ້ອງ ມີສິດອອກໃບອະນຸຍາດກ່ຽວກັບປ້າຍໂຄສະນາສິນຄ້າ ແລະ ບໍລິການຂະໜາດໃຫຍ່, ປ້າຍໂຄສະນາທີ່ມີການລົງທຶນ ຫຸ້ນສ່ວນລະຫວ່າງລັດຖະບານກັບຕ່າງປະເທດ ແລະ ການລົງທຶນຂອງຕ່າງປະເທດໂດຍກົງ ( 100% ) ຢູ່ ສປປ ລາວ ພ້ອມນີ້ມີສິດ ແລະ ໜ້າທີຊຸກຍູ້, ຕິດຕາມກວດກາການປະຕິບັດຂໍ້ກຳນົດ, ລະບຽບການ ຂອງທຸກພາກສ່ວນທີ່ກ່ຽວຂ້ອງກັບປ້າຍ ແລະ ກວດກາ ຂໍ້ກຳນົດ ກົດລະບຽບ ທີ່ຂັ້ນລຸ່ມວາງອອກ, ມີສິດແຕ່ງຕັ້ງ ໜ່ວຍສະເພາະກິດ ລົງໄປກວດກາ, ແກ້ໄຂບາງກໍລະນີທີ່ຈຳເປັນ;

1.2 ຂັ້ນພະແນກຖະແຫລງຂ່າວ ແລະວັດທະນະທຳປະຈຳແຂວງ, ນະຄອນຫລວງວຽງຈັນ ແລະເຂດ ພິເສດ: ຫ້ອງການພະແນກຖະແຫລງຂ່າວ ແລະວັດທະນະທຳປະຈຳແຂວງ, ນະຄອນຫລວງວຽງຈັນ ແລະເຂດ ພິເສດ ມີສິດອອກອະນຸຍາດ ແລະກວດກາ, ຄຸ້ມຄອງປ້າຍໃຫ້ທຸກຫົວໜ່ວຍທຸລະກິດທີ່ຖືທະ ບຽນຖືກຕ້ອງ ແລະ ປ້າຍບັນດາສຳນັກງານ, ອົງການຈັດຕັ້ງຂອງລັດຢູ່ຂັ້ນທ້ອງຖິ່ນຂອງຕົນ;

1.3 ຂັ້ນເມືອງ: ຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳປະຈຳເມືອງ ມີໜ້າທີ່ກວດກາຄຸ້ມ ຄອງອອກ ໃບອະນຸຍາດໂຄສະນາດ້ວຍປ້າຍໃຫ້ທຸກໆ ຫົວໜ່ວຍທຸລະກິດຂະໜາດນ້ອຍ ທີ່ ຖືທະບຽນຖືກຕ້ອງຢູ່ໃນຂອບເຂດເມືອງຂອງຕົນ.

## ໝວດທີ III
## ວ່າດ້ວຍເນື້ອໃນ ແລະ ຂອບເຂດການອະນຸຍາດ
## ນຳໃຊ້ປ້າຍ, ປ້າຍໂຄສະນາສິນຄ້າ ແລະ ບໍລິການ

### ມາດຕາ 4. ເນື້ອໃນ ແລະ ຂອບເຂດການອະນຸຍາດນຳໃຊ້ປ້າຍ

4.1 ປ້າຍສຳນັກງານອົງການ, ປ້າຍຄຳຂວັນ, ປ້າຍໂຄສະນາ ຕ້ອງເອົາໂຕໜັງສືລາວ;

4.2 ເປັນຫລັກ, ຂຽນໃຫ້ຖືກຕ້ອງຕາມຫລັກໄວຍາກອນລາວ, ໃຫ້ຂຽນໂຕໜັງສືລາວໃຫຍ່ກວ່າ ໂຕໜັງສືສາກົນ ແລະ ຕ້ອງຢູ່ເທິງ ຫລື ໂຕໜັງສືລາວຢູ່ຊາຍ ແລະ ໂຕໜັງສາກົນຢູ່ຂວາມື້ສະເໝີ;

4.3 ການຕິດຄຳຂວັນ, ປ້າຍໂຄສະນາຕາມເສັ້ນທາງຫລວງ ແລະ ເສັ້ນທາງທີ່ສຳຄັນ ໃນນະຄອນຫລວງວຽງຈັນ, ບັນດາແຂວງ ແລະ ເຂດພິເສດ ໃນຂອບເຂດທົ່ວປະເທດຕ້ອງໃຫ້ໄດ້ມາດຖານ ( ມີລະບຽບແນະນຳຕ່າງຫາກ );

4.4 ປ້າຍໂຄສະນາ ແລະ ບໍລິການ ຫລື ປ້າຍແນະນຳ, ເຊີນຊວນທຸກປະເພດ ຕ້ອງໄດ້ຮັບອະນຸຍາດຈາກອົງການຈັດຕັ້ງທີ່ກ່ຽວຂ້ອງຈຶ່ງຖືວ່າຖືກຕ້ອງ;

4.5 ການຕິດຕັ້ງປ້າຍ ແລະ ປ້າຍໂຄສະນາ ຈຳໜ່າຍຂາຍຍົກ ແລະ ຂາຍຍ່ອຍຢາສູບທຸກຊະນິດ ໃຫ້ຕິດຕັ້ງໄດ້ພຽງໜຶ່ງປ້າຍເທົ່ານັ້ນ, ໃຫ້ຕັ້ງຢູ່ຂອບເຂດຂອງບໍລິສັດ ຫລື ໂຮງງານຂອງຕົນ.

- ສ່ວນເນື້ອໃນຜະລິດຕະພັນນັ້ນ ກໍໃຫ້ຂຽນໂຕໜັງສືລາວຢູ່ເທິງ ແລະ ໃຫຍ່ກວ່າພາສາຕ່າງ ປະເທດ;
- ສຳລັບຂະໜາດຂອງປ້າຍ ແມ່ນບໍ່ໃຫ້ເກີນຂະໜາດ 4 ແມັດ x 8 ແມັດ;
- ສ່ວນຢູ່ທາງໃນຂອງຮ້ານອາຫານ ແລະ ສະຖານທີ່ບັນເທີງທຸກປະເພດ ອາດຈະຕິດຕັ້ງປ້າຍ ຕື່ມອີກກໍໄດ້, ແຕ່ໃຫ້ເບິ່ງຕາມຄວາມເໝາະສົມ;

4.6 ບັນດາປ້າຍໂຄສະນາສິນຄ້າ, ປ້າຍໂຄສະນາບໍລິການຜະລິດຕະພັນພາຍໃນປະເທດ, ພາຫະນະກົນຈັກ, ເຄື່ອງອຸປະກອນເຕັກນິກທີ່ຮັບໃຊ້ໂດຍກົງໃຫ້ແກ່ການພັດທະນາ ເສດຖະກິດ- ສັງຄົມ ຂອງ ຊາດ, ຈະມີການພິຈາລະນາອະນຸຍາດຕາມຄວາມເໝາະສົມ.

### ມາດຕາ 5: ລັກສະນະຮູບຂອງປ້າຍ

**1.1** ປ້າຍສຳນັກງານຂອງພັກ, ສຳນັກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ: ພື້ນສີແດງ, ໂຕໜັງສືສີຂາວ;

**1.2** ປ້າຍສຳນັກງານອົງການຂອງລັດບໍລິຫານ-ວິຊາການ-ໂຮງຮຽນ-ໂຮງໝໍ: ພື້ນສີຟ້າ, ໂຕໜັງສືສີຂາວ;

**1.3** ປ້າຍບໍລິສັດຂອງລັດ, ລັດວິສາຫະກິດ, ຫ້າງຮ້ານຂອງລັດ: ພື້ນສີຂາວ, ໂຕໜັງສືສີແດງ;

**1.4** ປ້າຍບໍລິສັດຫ້າງຮ້ານ ແລະ ປ້າຍຮ້ານຂາຍເຄື່ອງຍ່ອຍຂອງເອກະຊົນ: ພື້ນສີເຫລືອງ, ໂຕຫນັງສືສີແດງ;

**1.5** ປ້າຍສໍານັກງານອົງການສະຖານທູດ, ອົງການຈັດຕັ້ງສາກົນ, ເຮືອນພັກ ຂອງຄົນຕ່າງປະເທດ, ບໍລິສັດຫ່າງຮ້ານຂອງຕ່າງປະເທດ: ພື້ນສີຂາວ, ໂຕຫນັງສືສີຟ້າ ຫລື ປ້າຍທີ່ເປັນສີສັນ ເອກະລັກສະເພາະກໍໄດ້;

**1.6** ບັນດາປ້າຍທີ່ໄດ້ຮັບອະນຸຍາດຕິດຕັ້ງໂຄສະນາ ຕ້ອງໃຫ້ພໍດີພໍງາມສົມສ່ວນກັບອາຄານສະຖານທີ່, ຫນ້າຮ້ານ ຫລື ຫນ້າສໍານັກງານອົງການຢ່າງເຫມາະສົມ;

**1.7** ປ້າຍໂຄງການ, ວິຊາການດ້ານຕ່າງໆ ນັບທັງພາກລັດ ແລະ ເອກະຊົນ ຖ້າມີຄວາມຈໍາເປັນ ນໍາໃຊ້ສີພື້ນ ແລະ ຕົວຫນັງສື ສີອື່ນທີ່ສອດຄ່ອງກັບວຽກງານນັ້ນກໍ່ໄດ້ຮັບການເຫັນດີຈາກພາກສ່ວນທີ່ກ່ຽວຂ້ອງເສຍກ່ອນ;

**1.8** ບັນດາສໍານັກງານອົງການຈັດຕັ້ງ, ພັກ, ລັດ, ອົງການຈັດຕັ້ງສາກົນ, ບໍລິສັດ, ຫ້າງຮ້ານຂອງ ລັດ ແລະ ເອກະຊົນ... ທີ່ຢາກນໍາໃຊ້ປ້າຍດ້ວຍຕົວຫນັງສືສີດໍາ ກໍ່ໄດ້ແຕ່ຕ້ອງນໍາໃຊ້ສີພື້ນທີ່ ໄດ້ກໍານົດໄວ້ຢູ່ໃນ ຫມວດ III ມາດຕາ 5;

**1.9** ອົງການຈັດຕັ້ງຕ່າງໆ ຫົວຫນວ່ຍທຸລະກິດທຸກພາກສ່ວນຫາກໄດ້ຮັບອະນຸຍາດ ໃຫ້ນໍາໃຊ້ເນື້ອໃນປ້າຍໂຄສະນາແລ້ວໃຫ້ໄປພົວພັນ ກັບ ເຈົ້າຫນ້າທີ່ຄຸ້ມຄອງເຄຫະສະຖານ ( ອາຄານ ) ແລະ ຜັງເມືອງຂັ້ນຕ່າງໆ ທີ່ກ່ຽວຂ້ອງເພື່ອຂໍອະນຸຍາດກ່ຽວກັບສະຖານ ທີ່ຕິດຕັ້ງ ແລະ ດ້ານ ເຕັກນິກໂຄງສ້າງ.

## ຫມວດທີ IV
## ວ່າດ້ວຍຂໍ້ຫ້າມ

**ມາດຕາ 6 : ທຸກໆ ການຈັດຕັ້ງ, ພາກລັດ, ເອກະຊົນ, ນິຕິບຸກຄົນຕ້ອງເອົາໃຈໃສ່ປະຕິບັດຕາມຂໍ້ຫ້າມດັ່ງຕໍ່ໄປນີ້ :**

6.1 ຫ້າມການນໍາເຂົ້າ ແລະ ການຕິດຕັ້ງປ້າຍໂຄສະນາ ແນະນໍາເຊີນຊວນຕ່າງໆ ທີ່ຜະລິດສໍາເລັດຮູບຈາກຕ່າງປະເທດ ທີ່ໃຊ້ໂຕຫນັງສືສາກົນກ່ອນໄດ້ຮັບອະນຸຍາດ ຈາກພາກສ່ວນທີ່ກ່ຽວຂ້ອງ;

6.2 ຫ້າມຕິດປ້າຍໂຄສະນາສິນຄ້າແບບເຄື່ອນທີ່ ເຊັ່ນ: ຕິດໃສ່ພາຫະນະຂົນສົ່ງໂດຍສານທຸກ ປະເພດກ່ອນໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ;

6.3 ຫ້າມໂຄສະນາຄຸນນະພາບສິນຄ້າ ແລະ ບໍລິການຂອງຕົນເກີນຄວາມເປັນຈິງ ແລະ ທັບຖົມ ຍຸບຍອບຂອງບຸກຄົນອື່ນ;

6.4 ຫ້າມຕິດປ້າຍຄໍາຂວັນ, ປ້າຍໂຄສະນາສິນຄ້າ ແລະ ບໍລິການຕ່າງໆ ໃສ່ສະຖານທີ່ ສາທາລະນະຊົນ ແລະ ສະຖານທີ່ຫວງຫ້າມ ກ່ອນໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

# ໝວດທີ V
# ມາດຕະການ

## ມາດຕາ 7 : ການຍ້ອງຍໍ ແລະ ປະຕິບັດວິໄນ

7.1 ທຸກໆ ການຈັດຕັ້ງພາກລັດ, ເອກະຊົນ, ຫົວໜ່ວຍທຸລະກິດ, ບຸກຄົນ ແລະ ນິຕິບຸກຄົນ ຫາກໄດ້ອະນຸຍາດ ໃຫ້ນຳໃຊ້ປ້າຍ ແລະ ຕິດຕັ້ງປ້າຍໂຄສະນາ ເມື່ອໝົດກຳນົດເວລາ ແລ້ວໃຫ້ ສະເໜີອາຍຸເອກະສານກັບພາກສ່ວນກ່ຽວຂ້ອງ ບໍ່ດັ່ງນັ້ນຈະຖືວ່າລະເມີດ ຕໍ່ຂໍ້ກຳນົດສະບັບນີ້, ສ່ວນປ້າຍທາງການສຳນັກງານອົງການຕ່າງໆ ອະນຸຍາດພຽງຄັ້ງ ດຽວ ແມ່ນໃຊ້ໄດ້ຍາວ ນານ, ຖ້າຢາກປ່ຽນແປງຕ້ອງສະເໜີຕໍ່ພາກສ່ວນກ່ຽວຂ້ອງ;

7.2 ບັນດາອົງການຈັດຕັ້ງ, ບໍລິສັດຫົວໜ່ວຍທຸລະກິດ, ບຸກຄົນ, ນິຕິບຸກຄົນທີ່ປະຕິບັດ ຖືກ ຕ້ອງຕາມຂໍ້ກຳນົດສະບັບນີ້ ຈະໄດ້ຮັບການສົ່ງເສີມ, ຍ້ອງຍໍ ແລະ ໄດ້ຮັບການປົກປ້ອງ ຕາມລະບຽບກົດໝາຍ;

**7.3 ຖ້າຜູ້ໃດລະເມີດຂໍ້ກຳນົດສະບັບນີ້ຈະຖືກສັ່ງໃຫ້ເລີກອອກ ຫລື ປັບໃໝ, ດຳເນີນຄະດີ ຕາມລະບຽບກົດໝາຍບ້ານເມືອງ, ປະຕິບັດວິໄນ ຕາມຂັ້ນຕອນ ດັ່ງນີ້:**

- ❖ ຖ້າກາຍກຳນົດ 3 ເດືອນຂຶ້ນໄປຈະຖືກປັບໃໝ 20% ຂອງມູນຄ່າທຳນຽມ ຂອງປ້າຍໂຄ ສະນາຄັ້ງກ່ອນ ແລະ ກ່ອນເດືອນ
- ❖ ຖ້າກາຍກຳນົດ 6 ເດືອນຂຶ້ນໄປຈະຖືກປັບໃໝ 50 % ຂອງມູນຄ່າທຳນຽມ ຂອງປ້າຍໂຄ ສະນາຄັ້ງກ່ອນ ແລະ ກ່ອນເດືອນທັງເຮັດບົດບັນທຶກ
- ❖ ຖ້າກາຍກຳນົດ 1 ປີ, ( ໜຶ່ງປີ ) ຖືວ່າມີເຈດຕະນາຝ່າຝືນຕໍ່ຂໍ້ກຳນົດສະບັບນີ້ ແລະ ຈະຖືກປັບ ໃໝ 100% ທັງສັ່ງຢຸດການນຳໃຊ້ປ້າຍໂຄສະນາດັ່ງກ່າວ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

### ມາດຕາ 8 : ການມອບສິດ

– ມອບໃຫ້ກົມວັດທະນະທຳມະຫາຊົນ, ພະແນກຖະແຫລງຂ່າວ ແລະ ວັດທະນະທຳປະຈຳແຂວງ, ນະຄອນຫລວງວຽງຈັນ ແລະ ເຂດພິເສດ ໃນທົ່ວປະເທດ ສົມທົບກັບເຈົ້າໜ້າທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນຂັ້ນຕ່າງໆ ຈົ່ງພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

### ມາດຕາ 9 : ຜົນສັກສິດ

ຂໍ້ກຳນົດສະບັບນີ້, ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ທຸກຂໍ້ກຳນົດທີ່ຂັດກັບຂໍ້ກຳນົດສະບັບລ້ອນແຕ່ຖືກລົບລ້າງ.

ລັດຖະມົນຕີວ່າການ
ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

**ພັນດວງຈິດ ວົງສາ**
( ເຊັນ ແລະ ຈ້ຳກາແລ້ວ )